# ຄມສ ເປີດການແຂ່ງຂັນຮູບຖ່າຍພາກພື້ນ ເພື່ອ ສົ່ງເສີມ ການຮ່ວມມືໃນ ການນຳໃຊ້ ແມ່ນ້ຳຂອງ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 7 ກໍລະກົດ 2017**– ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ເປີດການແຂ່ງຂັນຮູບຖ່າຍພາກພື້ນ ພາຍໃຕ້ຄຳຂວັນ *"ຄວາມຫຼາກຫຼາຍຂອງແມ່ນ້ຳຂອງ ຜ່ານສາຍຕາຂອງທ່ານ"* ໃຫ້ກັບ ນັກຖ່າຍຮູບສະໝັກຫຼິ້ນ ທຸກໄວ ທີ່ແມ່ນພົນລະເມືອງ ແລະ ອາໃສຢູ່ ຣາຊະອານາຈັກກຳປູເຈຍ , ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ.

ການແຂ່ງຂັນຄັ້ງນີ້ ແນໃສ່ ຊອກຫາຮູບຖ່າຍທີ່ສ້າງສັນ, ສະແດງໃຫ້ເຫັນຄວາມຫຼາກຫຼາຍ ຂອງ ແມ່ນ້ຳຂອງ, ນັບຕັ້ງແຕ່ ທຳມະຊາດທີ່ງົດງາມ ໄປເຖິງ ການນຳໃຊ້ນ້ຳເພື່ອຕອບສະໜອງຄວາມຕ້ອງການອັນທ້າທາຍ ເລັ່ງໃສ່ ໃຫ້ເຫັນຄວາມ ຈຳເປັນ ໃນການຮ່ວມມືຂ້າມຊາຍແດນ ເພື່ອ ການພັດທະນາທີ່ຍືນຍົງ ໃນອ່າງແມ່ນ້ຳຂອງ.

"ການແຂ່ງຂັນ ຈະສ້າງໂອກາດໃຫ້ນັກຖ່າຍຮູບສະໝັກຫຼິ້ນ ຈາກ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ສະເໜີຜົນງານ ທີ່ສະແດງອອກເຖິງ ຄວາມອຸດົມສົມບູນທາງ ຊັບພະຍາກອນທຳມະຊາດ, ສິ່ງທ້າທາຍທາງເສດຖະກິດ ແລະ ສັງຄົມ ທີ່ເກີດຂຶ້ນຈາກ ຄວາມຕ້ອງການໃນການນຳໃຊ້ນ້ຳ ກໍຄືແນວຄວາມຄິດ ໃນການແກ້ໄຂຜົນກະທົບເຫຼົ່ານີ້," ກ່າວໂດຍ ທ່ານ ຟາມ ຕວນ ຟານ, ຜູ້ບໍລິຫານ ຄມສ.

ໂດຍການຮ່ວມມືກັບ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ຂອງ ຣາຊະອານາຈັກ ກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ, ການແຂ່ງຂັນດັ່ງກ່າວ ແມ່ນກິດຈະກຳໜຶ່ງ ພາຍໃຕ້ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳ ແບບປະສົມປະສານ ໃນຂົງເຂດແມ່ນ້ຳຂອງ ທີ່ ອຳນວຍຄວາມສະດວກ ການຮ່ວມມື ຂ້າມຊາຍແດນ ລະຫວ່າງປະເທດ ໃນອ່າງແມ່ນ້ຳຂອງຕອນລຸ່ມ ທັງໃນລະດັບຊາດ ແລະ ພາກພື້ນ, ໂດຍການນຳໃຊ້ລະບຽບການ ຂອງ ຄມສ ແລະ ເຄື່ອງມື ໃນການເຈລະຈາການນຳໃຊ້ນ້ຳ, ການແລກປ່ຽນຂໍ້ມູນ ແລະ ການຕິດຕາມກວດກາການໄຫຼຂອງແມ່ນ້ຳ.

ເພື່ອເຂົ້າຮ່ວມການແຂ່ງຂັນໃນຄັ້ງນີ້, ນັກຖ່າຍຮູບ ຈະຕ້ອງນຳສົ່ງ ຮູບຖ່າຍຕົ້ນສະບັບບໍ່ເກີນ 5 ຮູບ ໃນຮູບແບບ ດິຈິຕອນ, ພ້ອມສົ່ງ ແບບຟອມສະໝັກ ຫາ mrcphotocontest@mrcmekong.org ກ່ອນ ວັນທີ **24 ກັນຍາ 2017** (ວັນແມ່ນ້ຳໂລກ). ແຕ່ລະຮູບຖ່າຍຕ້ອງປະກອບ ຄຳອະທິບາຍ ທີ່ບໍ່ເກີນ 100 ຄຳ ໃນພາສາອັງກິດ ແລະ ພາສາທ້ອງຖິ່ນ ທີ່ບັນລະຍາຍ ຄວາມຫມາຍຂອງຮູບພາບດັ່ງກ່າວ.

ຜູ້ຊະນະເລີດ ຮູບພາບທີ່ດີທີ່ສຸດ 12 ຮູບ ຈະໄດ້ຮັບລາງວັນເປັນເງິນສົດ ລະຫວ່າງ $100 – $500 ພ້ອມທັງ ຫຼຽນ ແລະ ໃບຍັ້ງຢືນ ໃນພິທີມອບຮັບລາງວັນ ທີ່ຈະຈັດຂຶ້ນໂດຍ ກອງເລຂາ ຄມສ ທີ່ ນະຄອນຫຼວງວຽງຈັນ, ສປປ ລາວ

ໃນທ້າຍປີນີ້. ຮູບຖ່າຍທີ່ຊະນະເລີດ ອາດຈະໄດ້ນຳໄປວາງສະແດງ ແລະ ຈັດພິມ ໃນປະຕິທິນ ຄມສ ປີ 2018 ແລະ ຜະລິດຕະພັນອື່ນໆ ຂອງ ຄມສ.

ລາຍລະອຽດທັງໝົດ ແມ່ນອ່ານໄດ້ ທີ່ www.mrcmekong.org/news-and-events/events/mrcphotocontest2017

-ຈົບ-

ລາຍລະອຽດເພີ່ມເຕີມ, ກະລຸນາຕິດຕໍ່
ຄະນະສື່ສານປະຊາສຳພັນ, ກອງເລຂາ ຄມສ
ອີເມວ: mrcphotocontest@mrcmekong.org
ໂທລະສັບ: +856 21 263 263